**ບັນທຶກຄວາມເຂົ້າໃຈ**

**ລະຫວ່າງມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ວິທະຍາເຂດຂອນແກ່ນ**

**ກັບ ຄະນະສົງວັດຜາໂອ ແຂວງ ຫຼວງພະບາງ ສປປ ລາວ**

ບັນທຶກຄວາມເຂົ້າໃຈສະບັບນີ້ ເຮັດຂຶ້ນເມື່ອ ວັນພຸດ ວັນທີ 17 ເດືອນ ມັງກອນ ຄ.ສ. 2024 ລະຫວ່າງມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ວິທະຍາເຂດຂອນແກ່ນ ກັບຄະນະສົງວັດຜາໂອ ແຂວງຫຼວງພະບາງ ສປປ ລາວ ໂດຍມີມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ວິທະຍາເຂດຂອນແກ່ນ ກັບຄະນະສົງວັດຜາໂອ ເຫັນດີຮ່ວມກັນໃນລະຫວ່າງການປະຊຸມຮ່ວມກັນ ຄັ້ງທີ 1/2024 ເມື່ອ ວັນພຸດ ວັນທີ 17 ເດືອນ ມັງກອນ ຄ.ສ. 2024 ເພື່ອຮ່ວມກັນໃນການພັດທະນາບຸກຄະລາກອນ ການບໍລິການວິຊາການ ແລະການເຜີຍແຜ່ພະພຸດທະສາສະໜາ ແລະ ການທະນຸບຳລຸງສິລະປະວັດທະນະທຳ ເພື່ອນຳໄປສູ່ການພັດທະນາ ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນຂອງຄະນະສົງວັດຜາໂອ ແລະບຸກຄະລາກອນຂອງມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ວິທະຍາເຂດຂອນແກ່ນ ໂດຍທັງສອງຝ່າຍມີເປົ້າໝາຍໃນການພັດທະນາສາສະນະບຸກຄົນ ແລະ ສົ່ງເສີມການເຜີຍແຜ່ພະພຸດທະສາສະໜາ ໃຫ້ເກີດຜົນສຳລິດຢ່າງເປັນຮູບປະທຳ ແລະມີເຈດຕະນາລົມໂດຍກຳນົດໃຫ້ມີການບັນທຶກຄວາມເຂົ້າໃຈເພື່ອຄວາມຮ່ວມມືລະຫວ່າງກັນ ດັ່ງນີ້:

**ຂໍ້ 1. ຄວາມຮ່ວມມືດ້ານວິຊາການແລະການວິໄຈ**

1.1. ມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ວິທະຍາເຂດຂອນແກ່ນ ກັບຄະນະສົງວັດຜາໂອ ແຂວງຫຼວງພະບາງ ສປປ ລາວ ຈະຮ່ວມມືກັນສຶກສາ ຄົ້ນຄວ້າ ວິໄຈ ແລະພັດທະນາອົງຄວາມຮູ້ດ້ານສິລະປະວັດທະນະທຳ ແລະ ພະພຸດທະສາສະໜາ ເພື່ອພັດທະນາອົງຄວາມຮູ້ດ້ານພຸດທະນະວັດຕະກຳ ໂດຍຈະຮ່ວມກັນຈັດທຳໂຄງການປະລິວັດໜັງສືໃບລານ ແລະ ຄຳພີທາງພະພຸດທະສາສະໜາ ແລະກິດຈະກຳໂຄງການອື່ນໆ.

1.2. ມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ວິທະຍາເຂດຂອນແກ່ນ ກັບຄະນະສົງວັດຜາໂອ ແຂວງຫຼວງພະບາງ ສປປ ລາວ ຈະຮ່ວມກັນເຜີຍແຜ່ອົງຄວາມຮູ້ດ້ານພຸດທະນະວັດຕະກໍາເພື່ອພັດທະນາປັນຍາແລະຄຸນນະທໍາ.

**ຂໍ້ 2. ຄວາມຮ່ວມມືການພັດທະນາສັກກະຍະພາບບຸກຄະລາກອນ**

2.1. ມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ວິທະຍາເຂດຂອນແກ່ນ ກັບຄະນະສົງວັດຜາໂອ ແຂວງຫຼວງພະບາງ ສປປ ລາວ ຈະຮ່ວມມືກັນໃນການພັດທະນາສາສະນະບຸກຄົນທັງທີ່ເປັນບຸກຄະລາກອນຂອງມະຫາວິທະຍາໄລ ພະພິກຂຸ ສາມະເນນ ຄະນະສົງວັດຜາໂອ ແລະບຸກຄະລາກອນຂອງໂຮງຮຽນມັດທະຍົມສົງວັດຜາໂອ ແຂວງຫຼວງພະບາງ ສປປ ລາວ ໂດຍການແລກປ່ຽນບຸກຄະລາກອນເພື່ອການຈັດການສຶກສາຂອງທັງສອງຝ່າຍ.

2.2. ມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ວິທະຍາເຂດຂອນແກ່ນ ກັບຄະນະສົງວັດຜາໂອ ແຂວງຫຼວງພະບາງ ສປປ ລາວ ຈະຮ່ວມມືກັນຈັດປະຊຸມສໍາມະນາທາງວິຊາການດ້ານສາສະໜາແລະວັດທະນະທໍາ ທັງລະບົບອອນລາຍ ແລະລະບົບເຊິ່ງໜ້າ ຢ່າງນ້ອຍປີລະ 1 ຄັ້ງ.

**ຂໍ້ 3. ຄວາມຮ່ວມມືໃນການສະໜັບສະໜູນການສຶກສາໃນລະດັບມະຫາວິທະຍາໄລ**

3.1 ມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ວິທະຍາເຂດຂອນແກ່ນ ກັບຄະນະສົງວັດຜາໂອ ແຂວງຫຼວງພະບາງ ສປປ ລາວ ຈະຮ່ວມມືກັນໃນການພັດທະນາສາສະນະບຸກຄົນໂດຍຈະຮ່ວມມືກັນສະໜັບສະໜູນສົ່ງເສີມການສຶກສາຂອງບຸກຄະລາກອນ ໂດຍວິທະຍາເຂດຂອນແກ່ນຈະອໍານວຍຄວາມສະດວກໃຫ້ບຸກຄະລາກອນຂອງວັດຜາໂອ ແລະນັກຮຽນຂອງໂຮງຮຽນມັດທະຍົມສົງວັດຜາໂອ ແຂວງຫຼວງພະບາງ ສປປ ລາວ ໃນການເຂົ້າສຶກສາຕໍ່ລະດັບປະລິນຍາຕີ ປີການສຶກສາລະ 10 ອົງ/ຄົນ ລະດັບປະລິນຍາໂທ ປີການສຶກສາລະ 2 ອົງ/ຄົນ ແລະລະດັບປະລິນຍາເອກ ປີການສຶກສາລະ 2 ອົງ/ຄົນ.

**ຂໍ້ 4. ຄວາມຮ່ວມມືດ້ານການບໍລິການວິຊາການ**

4.1. ມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ວິທະຍາເຂດຂອນແກ່ນ ກັບຄະນະສົງວັດຜາໂອ ແຂວງຫຼວງພະບາງ ສປປ ລາວ ຈະຮ່ວມມືກັນໃນການບໍລິການວິຊາການທາງພະພຸດທະສາສະໜາແລະການທະນຸບໍາລຸງສິລະປະວັດທະນະທໍາ ເພື່ອພັດທະນາປັນຍາແລະຄຸນນະທໍາ ທັງທາງລະບົບອອນລາຍແລະລະບົບເຊິ່ງໜ້າ ຢ່າງນ້ອຍປີລະ 1 ຄັ້ງ

4.2. ມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ວິທະຍາເຂດຂອນແກ່ນ ກັບຄະນະສົງວັດຜາໂອ ແຂວງຫຼວງພະບາງ ສປປ ລາວ ຈະຮ່ວມມືກັນເຜີຍແຜ່ອົງຄວາມຮູ້ດ້ານພຸດທະນະວັດຕະກໍາເພື່ອພັດທະນາປັນຍາແລະຄຸນນະທໍາ.

**ຂໍ້ 5. ໄລຍະເວລາຂອງຄວາມຮ່ວມມື**

ບັນທຶກຄວາມເຂົ້າໃຈລະຫວ່າງກັນສະບັບນີ້ ມີຂອບເຂດໄລຍະເວລາຂອງຄວາມຮ່ວມມືເປັນເວລາ 3 ປີ ໂດຍເລີ່ມຕັ້ງແຕ່ວັນທີ 17 ມັງກອນ ຄ.ສ. 2024 ເຖິງວັນທີ 30 ເມສາ ຄ.ສ. 2026 ເຊິ່ງມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ວິທະຍາເຂດຂອນແກ່ນ ກັບຄະນະສົງວັດຜາໂອ ແຂວງຫຼວງພະບາງ ສປປ ລາວ ຈະດຳເນີນການຮ່ວມກັນເຮັດແຜນປະຕິບັດການແລະກິດຈະກຳໂຄງການຕ່າງ ໆ ຕາມຂໍ້ຕົກລົງຄວາມເຂົ້າໃຈ ນັບຈາກວັນທີຜູ້ແທນທັງສອງຝ່າຍໄດ້ລົງນາມໃນເອກະສານບັນທຶກການປະຊຸມສະບັບນີ້ ເປັນທີ່ຮຽບຮ້ອຍແລ້ວ.

ຂ້າພະເຈົ້າ ເຊິ່ງເປັນຕົວແທນມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ວິທະຍາເຂດຂອນແກ່ນ ແລະຕົວແທນຄະນະສົງວັດຜາໂອ ແຂວງຫຼວງພະບາງ ສປປ ລາວ ໄດ້ຮັບຮູ້ແລະເຂົ້າໃຈບັນທຶກການປະຊຸມສະບັບນີ້ ໂດຍຕະຫຼອດແລ້ວ ຈຶ່ງຮ່ວມລົງລາຍເຊັນໄວ້ເປັນເອກະສານບັນທຶກຄວາມເຂົ້າໃຈລະຫວ່າງກັນໃນຄັ້ງນີ້.

| | |
|---|---|
| ............................................................ | ................................................... |
| ( ພະມະຫາດາວສະຫຍາມ ວະຊິຣະປັນໂຍ ,ຜສ.ດຣ. ) | ( ພະອາຈານອ່ອນແກ້ວ ກິດຕິພັດໂທ ) |
| ຜູ້ອຳນວຍການສຳນັກວິຊາການ | ເຈົ້າອະທິການວັດຜາໂອ |
| ວິທະຍາເຂດຂອນແກ່ນ | ປະທານອົງການພຸດທະສາສະໜາສຳພັນລາວ ແຂວງຫຼວງພະບາງ |
| ....................................................ພະຍານ | ..................................................ພະຍານ |
| ( ຣສ.ດຣ. ວິທະຍາ ທອງດີ ) | ( ພະອານຸສອນ ອະນຸສສະໂຣ ) |
| ຜູ້ຊ່ວຍອະທິການບໍດີຝ່າຍກິດຈະການທົ່ວໄປ | ຜູ້ອຳນວຍການໂຮງຮຽນມັດທະຍົມສົງວັດຜາໂອ |
| ....................................................ພະຍານ | ..................................................ພະຍານ |
| ( ຜສ.ດຣ. ນິເທດ ສະນັ່ນນາລີ ) | ( ປອ. ຄຳວອນ ບຸນຍະພອນ ) |
| ຜູ້ຊ່ວຍອະທິການບໍດີຝ່າຍວິຊາການ | ຜູ້ອຳນວຍການສູນຂໍ້ມູນພະພຸດທະສາສະໜາຫຼວງພະບາງ |